# ຄວາມສ່ຽງຂອງໄວໜຸ່ມຍິງ ແລະ ຊາຍ ຕາມຊ່ວງອາຍຸ ໃນ ສ ປ ປ ລາວ





| ເດັກຍິງ | ເດັກ ຊາຍ | ເດັກຍິງ/ເດັກຊາຍ |
|---|---|---|
| **ໄວເດັກ (ອາຍຸ 0-9 ປີ)** | | |
| • ສັງຄົມຈະໃຫ້ຄວາມເຄົາລົບຕໍ່ເດັກຊາຍ/ເພດຊາຍຫລາຍກວ່າ<br>• ການຖືກທາລຸນແລະລ່ວງລະເມີດທາງເພດ<br>• ມີຄວາມຕ່າງກັນໃນການເຂົ້າເຖິງອາຫານ ແລະ ການດູແລທາງການແພດ<br>• ເຂົ້າເຖິງການສຶກສາຕໍ່າ | • ມີປະສົບການຖືກວິໄນໂດຍຄວາມຮຸນແຮງແລະການທາລຸນໃນຄອບຄົວ ແລະ ໂຮງຮຽນ<br>• ມີຂໍ້ຈໍາກັດໄດ້ຮັບການດູແລເອົາໃຈໃສ່ສຸຂະພາບ(ຍ້ອນມີຄວາມເຊື່ອວ່າເດັກຊາຍແຂງແຮງກວ່າເດັກຍິງ)ບາງທ້ອງຖິ່ນ.<br>• ຖືກທາລຸນແລະລ່ວງລະເມີດທາງເພດ (ອັດຕາສ່ວນໜ້ອຍກວ່າເດັກຍິງ) | • ມີຫຼັກຖານ ແລະ /ຫຼື ປະສົບການຖືກໃຊ້ຄວາມຮຸນແຮງໃນຄອບຄົວ (ທົ່ວໂລກເຫັນໄດ້ບັນຫາເດັກຊາຍໃຊ້ຄວາມຮຸນແຮງ ແລະເດັກໄດ້ຮັບຜົນກະທົບທີ່ຕາມມາ) |
| **ໄວໜຸ່ມ (ອາຍຸ 10-14 ປີ)** | | |
| • ການຖືກຈໍາແນກທາງເພດ ແລະ ການ ຖືກລວນລາມ<br>• ການຖືພາໂດຍບໍ່ຕັ້ງໃຈ/ບໍ່ໄດ້ວາງແຜນຊຶ່ງເຮັດໃຫ້ມີຄວາມສ່ຽງຕໍ່ການຕາຍຫຼືການເກີດທີ່ເນື່ອງມາຈາກເຈັບປ່ວຍຈາກການເກີດລູກ ແລະຜົນກະທົບທາງດ້ານສັງຄົມອື່ນໆ<br>• ການທໍາແທ້ງທີ່ບໍ່ປອດໄພ<br>• ຄວາມຮຸນແຮງທາງເພດ<br>• ການຖືກບັງຄັບໃຫ້ແຕ່ງງານກ່ອນໄວກະສຽນ ແລະ ການປະຕິບັດຮີດຄອງປະເພອັນຫຼ້າຫຼັງທີ່ ເປັນໄພອັນຕະລາຍ<br>• ການຖືກໃສ່ຮ້າຍທາງໂລກໄຊເບີ້, ຮູບພາບລາມົກອານາຈານ ແລະ ການລ່ວງລະເມີດທາງເພດຈາກສື່ອອນລາຍ<br>• ມີຜົນກະທົບເມື່ອເລີ່ມເປັນປະຈໍາເດືອນລວມທັງຂໍ້ຈໍາກັດໃນການເຂົ້າເຖິງສະຖານທີ່ສາທາລະນະອື່ນໆ,ຂາດໂຮງຮຽນ,ອາລົມປ່ຽນແປງ ແລະມີຄວາມສັບສົນ. | • ມີປະສົບການຖືກທາລຸນທາງດ້ານຮ່າງກາຍໃນຄອບຄົວແລະຊຸມຊົນ<br>• ມີຄວາມກົດດັນເພີ່ມຂຶ້ນໃນຊອກຫາລາຍໄດ້ເພື່ອລ້ຽງຄອບຄົວ<br>• ການເປັນພໍ່ ຄົນໂດຍບໍ່ຕັ້ງໃຈ/ບໍ່ໄດ້ວາງແຜນ(ມີຜົນກະທົບຕໍ່ສັງຄົມ)<br>• ຄວາມຮຸນແຮງທາງເພດ(ອັດຕາສ່ວນໜ້ອຍກວ່າເດັກຍິງ)<br>• ມີຄວາມກົດດັນຈາກໝູ່ເພື່ອນໃຫ້ມີເພດສໍາພັນ, ຫຼືເວລາມີເພດສໍາພັນແລ້ວບໍ່ໃສ່ຖົງຢາງອານາໄມ<br>• ການຫ້າມໃນການໄປ ຮັບການບໍລິການດ້ານສຸຂະພາບຍ້ອນວ່າຄວາມຄິດທີ່ວ່າເດັກຊາຍເປັນເພດທີ່ເຂັ້ມແຂງກວ່າ<br>• ສ້າງຕັ້ງກຸ່ມເດັກຊາຍທີ່ມັກໃຊ້ຄວາມຮຸນແຮງ (ໃນບາງທ້ອງຖິ່ນ)<br>• ການຖືກໃສ່ຮ້າຍທາງໂລກໄຊເບີ້, ຮູບພາບລາມົກອານາຈານແລະການລ່ວງລະເມີດທາງເພດຈາກສື່ອອນລາຍ (ອັດຕາສ່ວນໜ້ອຍກວ່າເດັກຍິງ) | • ບໍ່ມີ (ຂໍ້ຈໍາກັດ) ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການໃຫ້ບໍລິການ ກ່ຽວກັບສຸຂະພາບຈະເລີນພັນ, ທາງເພດ ແລະ ການໃຫ້ບໍການທາງດ້ານສຸຂະພາບໂດຍທົ່ວໄປ<br>• ເປັນໄວທີ່ອອກໂຮງຮຽນຫຼາຍທີ່ສຸດ |

| ເດັກຍິງ | ເດັກຊາຍ | ເດັກຍິງ/ເດັກຊາຍ |
| --- | --- | --- |
| **ໄວໜຸ່ມ (ອາຍຸ 15-19 ປີ)** | | |
| • ມີຄວາມກົດດັນຈາກການຈຳແນກ ແລະ ການຍອມຮັບເພດຍິງມີບົດບາດທີ່ດ້ອຍກວ່າ ໃນການປະພຶດທາງສັງຄົມ ແລະທາງເພດ ຊຶ່ງເຮັດໃຫ້ມີຜົນກະທົບຕໍ່ພວກເຂົາເຈົ້າຄື:<br>• ຖືກບັງຄັບໃຫ້ແຕ່ງງານກ່ອນໄວສຽນ<br>• ການຖືພາໂດຍບໍ່ຕັ້ງໃຈ/ບໍ່ໄດ້ມີການວາງແຜນເປັນສາເຫດສ່ຽງຕໍ່ການຕາຍ ຫຼືການເກີດທີ່ເນື່ອງມາຈາກເຈັບປ່ວຍຈາກການເກີດລູກ ແລະ ຜົນກະທົບທາງດ້ານສັງຄົມອື່ນໆ<br>• ການທຳແທ້ງທີ່ບໍ່ປອດໄພ<br>• ຖືກຂົ່ມຂືນ ແລະ ໃຊ້ຄວາມຮຸນແຮງທາງເພດ (ລວມທັງການຂາຍຄວາມບໍລິສຸດ)<br>• ການຄ້າມະນຸດ<br>• ການມີເພດສຳພັນເພື່ອຜົນປະໂຫຍດ ແລະ ການຂາຍບໍລິການທາງເພດເພື່ອຕົວເອງ ຫຼື ຄອບຄົວ<br>• ການເສບສິ່ງເສບຕິດຕ່າງໆເຊັ່ນ: ເຫຼົ້າ, ຢາສູບ (ອັດຕາສ່ວນໜ້ອຍກວ່າໄວໜຸ່ມຊາຍ)<br>• ການຊຶມເສົ້າ ແລະ ຂ້າຕົວຕາຍ (ອັດຕາສ່ວນການຂ້າຕົວຕາຍໜ້ອຍກວ່າໄວໜຸ່ມຊາຍ)<br>• ຄວາມກັງວົນຕໍ່ຮູບຮ່າງໜ້າຕາ (ຄວາມກົດດັນເພື່ອຢາກຈ່ອຍ, ເພື່ອໃຫ້ເປັນດັ່ງຄົນອື່ນ)<br>• ການຖືກໃສ່ຮ້າຍທາງໂລກໄຊເບີ້,ຮູບພາບລາມົກອານາຈານ ແລະ ການລ່ວງລະເມີດທາງເພຈາກສື່ອອນລາຍ<br>• ມີອັດຕາການອອກໂຮງຮຽນທີ່ສູງ | • ມີຄວາມກົດດັນຈາກການຈຳແນກ ແລະ ການຍອມຮັບໄວໜຸ່ມຊາຍເປັນເພດທີ່ມີບົດບາດເໜືອກວ່າໃນການປະພຶດ ທາງສັງຄົມ, ທາງດ້ານອາລົມ ແລະທາງເພດ, (ໃນບັນດາປັດໃຈເຫຼົ່ານີ້) ເຮັດໃຫ້ມີຜົນກະທົບຕໍ່ພວກເຂົາເຈົ້າຄື:<br>• ການເປັນພໍ່ຄົນໂດຍບໍ່ຕັ້ງໃຈ/ບໍ່ໄດ້ມີການວາງແຜນ(ຊຶ່ງມີຜົນກະທົບທາງດ້ານສັງຄົມ)<br>• ມີຄວາມຮຸນແຮງທາງເພດ(ອັດຕາສ່ວນໜ້ອຍກວ່າໄວໜຸ່ມຍິງ)<br>• ການປະພຶດ (ທາງດ້ານເພດສຳພັນ)ທີ່ມີຄວາມສ່ຽງ<br>• ການເສບສິ່ງເສບຕິດຕ່າງໆເຊັ່ນ: ເຫຼົ້າ, ຢາສູບ<br>• ການຊຶມເສົ້າ ແລະ ຂ້າຕົວຕາຍ<br>• ການຕາຍຈາກການກໍ່ຄະດີຄວາມຮຸນແຮງ<br>• ການພົວພັນກັບກຸ່ມແກ້ງຕ່າງໆ<br>• ການຫ້າມໃນການເຂົ້າຫາການບໍລິການດ້ານສຸຂະພາບຍ້ອນມີຄວາມຄິດທີ່ວ່າໄວໜຸ່ມຊາຍເປັນເພດທີ່ເຂັ້ມແຂງກວ່າ<br>• ຄວາມກັງວົນຕໍ່ຮູບຮ່າງ(ຄວາມກົດດັນເພື່ອຢາກມີກ້າມຄວາມເປັນຜູ້ຊາຍ)<br>• ມີອັດຕາການເກີດອຸບັດຕິເຫດທ້ອງຖະໜົນທີ່ສູງ<br>• ການຖືກໃສ່ຮ້າຍທາງໂລກໄຊເບີ້,ຮູບພາບລາມົກອານາຈານ ແລະ ການລ່ວງລະ ເມີດ ທາງເພດຈາກສື່ອອນລາຍ<br>• ມີອັດຕາການອອກໂຮງຮຽນທີ່ສູງ | • ການປະເຊີນໜ້າກັບຄວາມຮຸນແຮງໃນສາຍສຳພັນ (ມີອັດຕາທີ່ແຕກຕ່າງກັນອີງໃສ່ສະພາບຂອງແຕ່ລະປະເທດ)<br>• ມີຂໍ້ຈຳກັດໃນການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບສຸຂະພາບຈະເລີນພັນ ແລະສຸຂະພາບທາງເພດ (ເຊັ່ນ: ການປ່ຽນແປງທາງຮ່າງກາຍເວລາເຂົ້າສູ່ໄວໜຸ່ມ, ຄວາມຮູ້ ສຶກເພິ່ງພໍໃຈທາງເພດ) ແລະການໃຫ້ບໍລິການດ້ານສາທາລະນະສຸກອື່ນໆ<br>• ເຊື້ອ HIV ແລະພະຍາດຕິດຕໍ່ທາງເພດສຳພັນ (ໂດຍທົ່ວໄປແລ້ວໄວໜຸ່ມຍິງມີອັດຕາສູງຫຼາຍໃນຫຼາຍທ້ອງຖິ່ນ)<br>• ມີອັດຕາການອອກໂຮງຮຽນທີ່ສູງ |
| **ໄວໜຸ່ມທີ່ຈະກ້າວສູ່ການເປັນຜູ້ໃຫຍ່ (ອາຍຸ 20-24 ປີ)** | | |
| • ມີປະສົບການຖືກໃຊ້ຄວາມຮຸນແຮງຈາກໝູ່ຄູ່ໃກ້ຊິດ<br>• ຖືກຂົ່ມຂືນ ແລະໃຊ້ຄວາມຮຸນແຮງທາງເພດ<br>• ການມີເພດສຳພັນເພື່ອຜົນປະໂຫຍດແລະການຂາຍບໍລິການທາງເພດເພື່ອຕົວເອງ ຫຼືຄອບຄົວ<br>• ຖືກບັງຄັບໃຫ້ແຕ່ງງານກ່ອນໄວກະສຽນ<br>• ຖືກຂົ່ມຂືນຈາກຄູ່ສົມລົດ<br>• ການຖືພາໂດຍບໍ່ຕັ້ງໃຈ/ບໍ່ໄດ້ມີການວາງແຜນຊຶ່ງມີຄວາມສ່ຽງຕໍ່ການຕາຍຫຼືການເກີດທີ່ເນື່ອງມາຈາກເຈັບປ່ວຍຈາກການເກີດລູກແລະຜົນກະທົບທາງດ້ານສັງຄົມອື່ນໆ<br>• ການທຳແທ້ງທີ່ບໍ່ປອດໄພ<br>• ການຄ້າມະນຸດໃນກຸ່ມໄວໜຸ່ມຍິງ<br>• ມີຄວາມຮັບຊອບທີ່ໜັກໜ່ວງໃນການເບິ່ງແຍງຮັບຜິດຊອບຄອບຄົວ | • ມີຄວາມຮູ້ສຶກ ແລະສາຍສຳພັນທີ່ຫ່າງໄກກັບລູກຫຼານ ແລະການເປັນພໍ່ແມ່ທີ່ບໍ່ໄດ້ອາໃສຢູ່ຮ່ວມນຳກັນ<br>• ການຫ້າມໃນການເຂົ້າຫາການບໍລິການດ້ານສຸຂະພາບຍ້ອນວ່າຄວາມຄິດທີ່ວ່າໄວໜຸ່ມຊາຍເປັນເພດທີ່ເຂັ້ມແຂງກວ່າ<br>• ການເປັນພໍ່ຄົນໂດຍບໍ່ຕັ້ງໃຈ/ບໍ່ໄດ້ມີການວາງແຜນ(ມີຜົນກະທົບທາງສັງຄົມ)<br>• ການພົວພັນກັບກຸ່ມແກ້ງຕ່າງໆ<br>• ການເສຍຊີວິດຈາກການກໍ່ ຄະດີຄວາມຮຸນແຮງ<br>• ມີສຸຂະພາບທາງຈິດບໍ່ເຂັ້ມແຂງ<br>• ການຫວ່າງງານ | • ມີຂໍ້ຈຳກັດໃນການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບສຸຂະພາບຈະເລີນພັນ,ສຸຂະພາບທາງເພດແລະການໃຫ້ບໍລິການດ້ານສາທາລະນະສຸກ ອື່ນໆ<br>• ເຊື້ອ HIV ແລະ ພະຍາດຕິດຕໍ່ທາງເພດສຳພັນ (ໂດຍທົ່ວໄປແລ້ວໄວໜຸ່ມຍິງມີອັດຕາສູງຫຼາຍໃນຫຼາຍທ້ອງຖິ່ນ)<br>• ຢາສູບ ແລະ ການດື່ມສິ່ງມຶນເມົາຕ່າງໆ(ໄວໜຸ່ມຊາຍມີອັດຕາສູງ ກວ່າ) |

(ຂໍ້ມູນຈາກ Promundo-US and UNFPA publication (2016): ເດັກຍິງ ແລະ ເດັກຊາຍໃນໄວໜຸ່ມໃຫ້ມີສ່ວນຮ່ວມ ເພື່ອສະໜັບສະໜູນຄວາມສະເໝີພາບທາງເພດ, ສຸຂະພາບ ແລະ ການເຂົ້າໃຈເຖິງຊ່ອງຫວ່າງຂອງພວກເຂົາ)

UNFPA
ອົງການສະຫະປະຊາຊາດກອງທຶນເພື່ອປະຊາກອນ
ບ້ານຫັດສະດີ, ຖະໜົນລ້ານຊ້າງ, P.O.BOX 345, ນະຄອນຫລວງວຽງຈັນ, ສປປ ລາວ, ໂທ: (856) 021 267777. ແຟັກ: (856) 021 267799

# 我们的产品

云报告

## 大数据平台

国内宏观经济数据库

国际经济合作数据库

行业分析数据库

## 条约法规平台

国际条约数据库

国外法规数据库

## 即时信息平台

新闻媒体即时分析

社交媒体即时分析

## 云报告平台

国内研究报告

国际研究报告

预览已结束，完整报告链接和二维码如下：

https://www.yunbaogao.cn/report/index/report?reportId=5_19731